**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການແຫ່ງຊາດ ເພື່ອຕ້ານ
ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ
ສຳນັກງານຂໍ້ມູນຕ້ານການຟອກເງິນ

ເລກທີ: 1123 /ສຕຟງ

ນະຄອນຫຼວງວຽງຈັນ, ວັນທີ 19 ມິຖຸນາ 2025

# ແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການ ທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ຜູ້ໃຫ້ບໍລິການ ຊັບສິນເໝືອນຈິງ, ທຸລະກິດ ຊື້ ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້ ຂາຍ ວັດຖຸມີຄ່າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດກາຊິໂນ, ວິສາຫະກິດກົດໝາຍ, ທະນາຍຄວາມ ທີ່ນັບຖື,

**ເລື່ອງ:** ການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍ ທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ ແລະ ຂໍ້ຕົກລົງວ່າດ້ວຍ ທຸລະກຳເງິນໂອນ ທີ່ມີມູນຄ່າເກີນກຳນົດ (ສະບັບປັບປຸງ).

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປັບປຸງ ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024.

ສຳນັກງານຂໍ້ມູນຕ້ານການຟອກເງິນ ຂໍຖືເປັນກຽດແຈ້ງມາຍັງ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ລວມມີ: ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດປະກັນໄພ, ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ຜູ້ໃຫ້ບໍລິການຊັບສິນເໝືອນຈິງ, ທຸລະກິດ ຊື້ ຂາຍ ອະສັງຫາລິມະຊັບ, ທຸລະກິດ ຊື້ ຂາຍ ວັດຖຸມີຄ່າ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ທຸລະກິດກາຊິໂນ, ວິສາຫະກິດກົດໝາຍ, ທະນາຍຄວາມ ຊາບວ່າ ປັດຈຸບັນ ສປປ ລາວ ໄດ້ສຳເລັດການປັບປຸງ ແລະ ຮັບຮອງ ຂໍ້ຕົກລົງວ່າດ້ວຍ ທຸລະກຳເງິນສົດທີ່ມີມູນຄ່າເກີນກຳນົດ, ສະບັບເລກທີ 448/ທຫລ, ລົງວັນທີ 02 ມິຖຸນາ 2025 ແລະ ຂໍ້ຕົກລົງວ່າດ້ວຍ ທຸລະກຳເງິນໂອນ ທີ່ມີມູນຄ່າເກີນກຳນົດ, ສະບັບເລກທີ 490/ທຫລ, ລົງວັນທີ 16 ມິຖຸນາ 2025 (ສາມາດດາວໂຫຼດໄຟຣເອກະສານຜ່ານເວັບໄຊທ໌ ສຕຟງ www.amlio.gov.la). ສະນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງເຂັ້ມງວດ.

<u>ໝາຍເຫດ</u>: ສຳລັບການລາຍງານທຸລະກຳເງິນສົດທີ່ມີມູນຄ່າເກີນກຳນົດ ແມ່ນເລີ່ມຈັດຕັ້ງປະຕິບັດແຕ່ເດືອນ ກໍລະກົດ 2025 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດຕາມເນື້ອໃນຈິດໃຈຂ້າງເທິງນີ້ດ້ວຍ.

**ວ່າການຫົວໜ້າສຳນັກງານ**

ສຳນັກງານຂໍ້ມູນຕ້ານການຟອກເງິນ

**ວິນຄຳ ລຸນທອນ**